**Mekong River Commission**

MEKONG RIVER COMMISSION · MRC · FOR SUSTAINABLE DEVELOPMENT

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263 Facsimile: (856-21) 263 264
Email: mrcs@mrcmekong.org Website: www.mrcmekong.org

# <u>*ບົດຂ່າວ*</u>

MRC No. 12/07

## *ປະເທດແຟງລັງ ໃຫ້ທຶນຊ່ວຍເຫລືອ ໂຄງການພັດທະນາພະລັງງານນ້ຳ ແລະ ໂຄງການສ້າງຄວາມສາມາດ ໃຫ້ແກ່ ຄະນະກຳມາທິການແມ່ນ້ຳຂອງສາກົນ*

**ນະຄອນຫລວງວຽງຈັນ, ສປປ ລາວ**
**7 ພະຈິກ 2007**

ມື້ນີ້, ຄະນະກຳມາທິການແມ່ນ້ຳຂອງສາກົນ (MRC) ແລະ ກະຊວງການຕ່າງປະເທດ ຂອງ ປະເທດແຟງລັງ ໄດ້ເຊັນລົງນາມ ຂໍ້ຕົກລົງ ມູນຄ່າ 2 ລ້ານ ເອີໂຣ (ຫລືເທົ່າກັບ 2.87 ລ້ານໂດລາສະຫະລັດ) ເພື່ອສະໜັບສະໜູນ ການພັດທະນາ ແຜນງານ ພະລັງງານນ້ຳ (1 ລ້ານ ເອີໂຣ), ໂຄງການຝຶກນັກວິຊາການໜຸ່ມນ້ອຍ ຈາກບັນດາປະເທດພາຄີ (ປະເທດ ທີ່ເປັນສະມາຊິກ ຂອງ MRC) (750,000 ເອີໂຣ) ແລະ ປະກອບສ່ວນ ໃຫ້ແກ່ ກອງທຶນຄຸ້ມຄອງນ້ຳ ຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ (250,000 ເອີໂຣ).

ຂໍ້ຕົກລົງໃຫ້ທຶນຊ່ວຍເຫລືອ ອັນໃໝ່ນີ້, ເຊິ່ງຈະກວມເອົາໄລຍະເວລາ ສີ່ປີ, ໄດ້ຖືກເຊັນລົງນາມໂດຍ ພະນະທ່ານ Lars BackstrÖm, ເອກອັກຄະລະຖະທູດ ປະເທດແຟງລັງ ປະຈຳ ປະເທດໄທ, ກຳປູເຈັຍ, ສປປ ລາວ ແລະ ມຽນມາ ແລະ ທ່ານ Do Manh Hung, ເຈົ້າໜ້າທີ່ ຮັກສາການ ຂອງ ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ ຢູ່ທີ່ ສຳນັກງານໃຫຍ່ ຂອງ ອົງການດັ່ງກ່າວ ທີ່ນະຄອນຫລວງວຽງຈັນ.

ຂໍ້ຕົກລົງດັ່ງກ່າວ ແມ່ນແນໃສ່ ເພື່ອເຮັດໃຫ້ ຄະນະກຳມາທິການແມ່ນ້ຳຂອງສາກົນ ສາມາດເລີ່ມດຳເນີນ ແຜນງານພະລັງງານ ນ້ຳ ຂອງອົງການດັ່ງກ່າວ ແລະ ສະໜອງທຶນ ໄລຍະທີ່ສອງ ໃຫ້ແກ່ ໂຄງການຝຶກນັກວິຊາການໜຸ່ມນ້ອຍ ຈາກບັນດາ ປະເທດພາຄີ , ລວມທັງ ໃຫ້ການສະໜັບສະໜູນ ກອງທຶນຄຸ້ມຄອງນ້ຳ.

ໂຄງການຝຶກນັກວິຊາການໜຸ່ມນ້ອຍ ຈາກບັນດາປະເທດພາຄີ ແມ່ນເປັນສ່ວນໜຶ່ງ ຂອງແຜນງານສ້າງຄວາມສາມາດ ແບບປະສົມ ປະສານ ຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ໂຄງການໄລຍະທີ່ສອງນີ້ ຈະໄດ້ຊ່ວຍ ນັກວິຊາ ການໜຸ່ມນ້ອຍ ຈາກບັນດາປະເທດພາຄີ ຈຳນວນ 40 ຄົນ ໃຫ້ມີໂອກາດເຮັດວຽກ, ຝຶກງານ ແລະ ຮຽນຮູ້ປະສົບການ ຢູ່ ຫ້ອງການສຳນັກງານ ຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ ເປັນໄລຍະເວລາ ສີ່ປີ. ກຸ່ມດັ່ງກ່າວ ແມ່ນຈະລວມມີ ນັກວິຊາການໜຸ່ມນ້ອຍ ຈາກ ຂະແໜງການນ້ຳ ທີ່ມາຈາກ ສີ່ປະເທດພາຄີ ແລະ ນອກຈາກນັ້ນ ກໍ່ຍັງມີ ອາຈານສອນ ຈາກ ມະຫາວິທະຍາໄລ ຕ່າງໆ ທີ່ຢູ່ໃນຂົງເຂດ. ໂຄງການນີ້ ວາງເປົ້າໝາຍວ່າ ຢ່າງໜ້ອຍ 35% ຂອງ ນັກວິຊາການໜຸ່ມນ້ອຍ ຕ້ອງແມ່ນເພດຍິງ.

ຜ່ານມາ ຄະນະກຳມະທິການແມ່ນ້ຳຂອງສາກົນ ແມ່ນໄດ້ວາງແຜນຈັດຕັ້ງປະຕິບັດ ແຜນງານພະລັງງານນ້ຳ ມາໄດ້ໄລຍະເວລາ ໜຶ່ງແລ້ວ ແລະ ການໃຫ້ທຶນຊ່ວຍເຫລືອໃນຄັ້ງນີ້ ແມ່ນຈະຊ່ວຍເຮັດໃຫ້ສາມາດພັດທະນາແຜນງານດັ່ງກ່າວ. ຈຸດປະສົງ ຂອງ

ການເຂົ້າຮ່ວມ ຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ ໃນການພັດທະນາພະລັງງານນ້ຳ ແມ່ນເພື່ອສົ່ງເສີມ ການ ພັດທະນາພະລັງງານນ້ຳ ທີ່ມີປະສິດທິຜົນ ແລະ ມີຄວາມເໝາະສົມ ທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຢູ່ໃນ ບັນດາປະເທດພາຄີ ຂອງ MRC ໃນຮູບແບບ ທີ່ມີການຮ່ວມມື ແລະ ມີການປະສານງານກັນເປັນຢ່າງດີ.

ກອງທຶນຄຸ້ມຄອງນ້ຳ ແມ່ນເປັນ ກອງທຶນທີ່ມີຄວາມຍືດຍຸ່ນ ເຊິ່ງໄດ້ຖືກສ້າງຕັ້ງຂຶ້ນ ໂດຍ ຄະນະກຳມາທິການແມ່ນ້ຳຂອງສາກົນ ເພື່ອໃຫ້ສາມາດຕອບສະໜອງຕໍ່ ຄວາມຕ້ອງການຕ່າງໆ ໃນໄລຍະສັ້ນ ຂອງບັນດາປະເທດສະມາຊິກ. ສິ່ງດັ່ງກ່າວ ແມ່ນ ລວມມີ ການສຶກສາຕ່າງໆ ທາງດ້ານນະໂຍບາຍຍຸດທະສາດ ແລະ ການສະໜອງຄຳປຶກສາ, ການທັດສະນະສຶກສາ ແລະ ຂະບວນການປຶກສາຫາລື ກ່ຽວກັບ ປະເດັນຕ່າງໆ ທີ່ມີລັກສະນະຂ້າມຊາດ, ແລະ ຄວາມຕ້ອງການທາງດ້ານການພັດທະນາ ຕ່າງໆ ຂອງແຜນງານ ເຊັ່ນ: ກອງປະຊຸມສຳມະນາ ແລະ ປະເມີນຜົນຕ່າງໆ.

ທ່ານ Hung ໄດ້ກ່າວຂອບໃຈຕໍ່ ລັດຖະບານປະເທດແຟງລັງ ສຳລັບ ການສະໜັບສະໜູນຢ່າງຕໍ່ເນື່ອງ ຕໍ່ວຽກງານຂອງ MRC ແລະ ທ່ານຍັງໄດ້ກ່າວວ່າ “ປະເທດແຟງລັງ ແມ່ນເປັນຜູ້ໃຫ້ການສະໜັບສະໜູນແກ່ MRC ເປັນໄລຍະເວລາອັນດົນນານ, ສະເພາະແຕ່ປີນີ້ ລັດຖະບານປະເທດແຟງລັງ ໄດ້ຕົກລົງອະນຸມັດ ເພື່ອສະໜອງທຶນຊ່ວຍເຫລືອ ມູນຄ່າຫລາຍກ່ວາ 8 ລ້ານ ໂດລາສະຫະລັດ ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດ ແຜນງານຄຸ້ມຄອງຂໍ້ມູນຂ່າວສານ ແລະ ຄວາມຮູ້ ເຊິ່ງເປັນ ແຜນງານອັນໃໝ່ຂອງພວກເຮົາ”.

“ພວກເຮົາ ມີຄວາມຮູ້ສຶກຂອບໃຈເປັນພິເສດ ສຳລັບ ການສະໜັບສະໜູນຂອງປະເທດຟິນແລນ ໃນຂົງເຂດຂອງການສ້າງຄວາມສາມາດ ແລະ ການພັດທະນາພະລັງງານນ້ຳ, ເຊິ່ງເປັນສອງຂະແໜງການ ທີ່ຕິດພັນກັບ ການພັດທະນາແບບຍືນຍົງ ຢູ່ໃນອ່າງແມ່ນ້ຳ. ຖ້າຫາກວ່າ ບັນດາປະເທດສະມາຊິກ ຂອງ ຄະນະກຳມະທິການແມ່ນ້ຳຂອງສາກົນ ຕ້ອງການທີ່ຈະບັນລຸເປົ້າໝາຍພັດທະນາຕ່າງໆ ຂອງເຂົາເຈົ້າ, ໜຶ່ງໃນຄວາມຈຳເປັນອັນຕົ້ນຕໍ ແມ່ນຈະຕ້ອງໄດ້ເສີມສ້າງຄວາມສາມາດ ຂອງ ນັກວິຊາການໜຸ່ມນ້ອຍ ໃນຂະແໜງຂອງການຄຸ້ມຄອງຊັບພະຍາກອນນ້ຳ ແບບປະສົມປະສານ ແລະ ໂຄງການອັນໃໝ່ນີ້ ຈະຊ່ວຍເຮັດໃຫ້ ຄະນະກຳມາທິການແມ່ນ້ຳຂອງສາກົນ ມີບົດບາດໃນການນຳພາໃນຄວາມກ້າວໜ້ານີ້”.

ທ່ານ Hung ຍັງໄດ້ກ່າວຕື່ມວ່າ ຄະນະກຳມະທິການແມ່ນ້ຳຂອງສາກົນ ແມ່ນມີບົດບາດອັນສຳຄັນ ໃນການພັດທະນາ ພະລັງ ງານນ້ຳ ແບບຍືນຍົງ ພາຍໃນອ່າງແມ່ນ້ຳ, ໂດຍສະເພາະ ແມ່ນກ່ຽວກັບ ປະເດັນ ແລະ ໂຄງການຕ່າງໆ ທີ່ມີລັກສະນະ ຂ້າມ ຊາດ ເຊິ່ງມີຜົນກະທົບໃນລະດັບອ່າງ ແລະ ໂຄງການທົ່ວໄປ ເຊິ່ງລວມເອົາ ສອງ ຫລື ຫລາຍປະເທດ ທີ່ເປັນສະມາຊິກ ຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ.

ທ່ານໄດ້ອະທິບາຍວ່າ ຄະນະກຳມະທິການແມ່ນ້ຳຂອງສາກົນ ແມ່ນສາມາດສະໜອງວິຊາການທາງດ້ານເຕັກນິກ ແລະ ທາງດ້ານການຄຸ້ມຄອງ ໃຫ້ແກ່ ບັນດາປະເທດ ສະມາຊິກ ແລະ ອົງການຜູ້ໃຫ້ທຶນຕ່າງໆ ແລະຍັງໄດ້ເຂົ້າຮ່ວມ ໃນການວາງ ແຜນ, ການຕິດຕາມກວດກາ ແລະ ມາດຕະການຕ່າງໆໃນການຫລຸດຜ່ອນຜົນກະທົບ ຖ້າຫາກມີການຮຽກຮ້ອງ ໂດຍ ບັນດາປະເທດສະມາຊິກ.

ຄະນະກຳມາທິການແມ່ນ້ຳຂອງສາກົນ ແມ່ນເປັນ ອົງການຈັດຕັ້ງລະຫວ່າງປະເທດ ທີ່ໄດ້ສ້າງຕັ້ງຂຶ້ນ ໃນປີ 1995 ໂດຍ ສັນຍາຂໍ້ຕົກລົງ ລະຫວ່າງ ລັດຖະບານ ຂອງ ປະເທດ ກຳປູເຈັຍ, ສປປ ລາວ, ໄທ ແລະ ຫວຽດນາມ ໃນການຮ່ວມມື ເພື່ອພັດທະນາ ຊັບພະຍາກອນນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງອື່ນໆ ຂອງ ອ່າງແມ່ນ້ຳຂອງ ໃຫ້ມີຄວາມຍືນຍົງ ຍາວນານ.

- ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ພົວພັນ: Virginia Addison, ເຈົ້າໜ້າທີ່ປະຊາສຳພັນ, Tel: 856 21 263 263 Ext 4703. Mobile: (856) 20 559 9139 Fax: (85621) 263 264 Email: virginia@mrcmekong.org